# ບົດທີ 3

# ການສະເດັດເຂົ້າກຸງຢ່າງຜູ້ມີໄຊ

## ພະເຢຊູເປັນທັງຜູ້ປະກາດພະທຳ ປະໂລຫິດ ແລະ ກະສັດ




ພະເຢຊູຢູ່ພູໝາກກອກເຫດເບິ່ງເຢລູຊາເລັມ

*ຈາກນີ້ຕໍ່ໄປເຮົາຈະຍົກເລື່ອງໃນອາທິດສຸດທ້າຍເທື່ອລະປະການ. ກ່ອນຈະເລີ່ມຕົ້ນຮຽນ ໃຫ້ເຮົາກັບໄປຮຽນຄືນກ່ຽວກັບຍຸກ 6 ເດືອນທີ່ພະອົງເສຍສະຫຼະ ໃນຫຼັກສູດ ມັດທາຍເຫຼັ້ມທີ 4*

**1** ກ. ເທື່ອສຸດທ້າຍທີ່ພະອົງໄປກຸງເຢລູຊາເລັມເພິ່ນໄປເທດສະການໃດ? _______________

ຂ. ອອກຈາກແຂວງໃດ? ____________________

ຄ. ຂ້າມແມ່ນ້ຳໃດ? ____________________

ງ. ເຖິງເມືອງໃດກ່ອນ? ____________________

ຈ. ພະອົງພັກນອນໃນເຮືອນຄົນເກັບພາສີຊື່ຫຍັງ? ____________________

ສ. ແລ້ວພະອົງໂຜດຄົນຕາບອດຊື່ຫຍັງ? ____________________

ຊ. ພະອົງເດີນທາງຕໍ່ເຖິງເຮືອນເພື່ອນຂອງພະອົງ 3 ຄົນ. ເຂົາຊື່ຫຍັງ?

___________________ ___________________ ແລະ ___________________

ຍ. ເພື່ອນສາມຄົນຢູ່ບ້ານໃດ? ____________________

ດ. ພະອົງໄປເຖິງບ້ານເຂົາ 6 ມື້ກ່ອນເທດສະການປັດສະຄາຄືວັນໃດ? _______________

ຕ. ຕະຫຼອດວັນສິນ ພະອົງພັກຜ່ອນຄືວັນໃດ? ____________________

ຖ. ຕອນແລງວັນນັ້ນ ເຂົາແຕ່ງການລ້ຽງໃຫ້ ມື້ໜ້າຕອນເຊົ້າພະອົງເດີນທາງໄປໃສ? _______

**2** ກ. ມື້ວັນອາທິດນັ້ນ ເປັນວັນທຳອິດໃນອາທິດສຸດທ້າຍໃນຊີວິດຂອງພະອົງ. ໃນວັນນັ້ນພະອົງເຂົ້າກຸງເຢລູຊາເລັມຢ່າງ ໃດ? ____________________

ຂ. ຂ່າວປະເສີດເຫຼັ້ມໃດບັນທຶກເລື່ອງເຫດການນັ້ນ? ____________________

ຄ. ມັດທາຍບົດແລະຂໍ້ໃດລາຍງານກ່ຽວກັບເຫດການນັ້ນ? ____________________

## ວັນອາທິດ: ເຂົ້າກຸງຢ່າງຜູ້ມີໄຊ

**3** ໃຫ້ອ່ານ ມັດທາຍ 21:1-11. ຕໍ່ໄປນີ້ເຮົາຈະຮຽນດ້ວຍວິທີສັງເກດ.

ກ. ລະຫວ່າງເບດທາເນຍກັບກຸງເຢລູຊາເລັມເຂົາຜ່ານບ້ານໃດ? ____________________

ຂ. ໃຫ້ທ່ານກັບໄປເປີດເບິ່ງແຜນທີ່ໜ້າປົກບົດທີ 2 ຢູ່ໜ້າ 19 ແມ່ນຕົວອັກສອນໃດໝາຍບ້ານນັ້ນໄວ້? ____________________

ຄ. ຢູ່ຂ້າງພູໃດ? ____________________

ງ. ພະອົງບອກສາວົກໃຫ້ໄປເອົາຕົວຫຍັງຈາກບ້ານນັ້ນ? __________ ແລະ __________

ຈ. ແມ່ນຜູ້ປະກາດພະທຳຄົນໃດໃນພະຄຳພີເດີມທີ່ທຳນວາຍເລື່ອງນັ້ນ? ____________________

ສ. ພະອົງຂີ່ຕົວໃດ? (ລູກາ 19:30) ____________________

ຊ. ປະຊາຊົນເອົາຫຍັງມາປູຕາມຫົນທາງ? __________ ແລະ __________

ຍ. ເຂົ້າກຸງເຢລູຊາເລັມແລ້ວ ພະອົງໄປໃສ? (ມາລະໂກ 11:11) ____________________

ດ. ພະອົງເບິ່ງສິ່ງທັງປວງໃກ້ຈະຄ່ຳ ກັບໄປໃສ? ____________________

**4** ໃຫ້ທ່ານກັບໄປເປີດແຜນທີ່ຢູ່ໜ້າ 19 ອີກ.

ກ. ພະອົງອອກຈາກບ້ານລາຊະໂລວັນໃດ? ____________________

ຂ. ບ້ານນັ້ນໝາຍດ້ວຍຕົວອັກສອນໃດ? ____________________

ຄ. ມາເຖິງອີກບ້ານໃດ? ____________________ ຕົວອັກສອນໃດ? ______

ງ. ບອກໃຫ້ພວກສາວົກເຂົ້າບ້ານນັ້ນເອົາສອງຕົວຫຍັງ? ____________________

ຈ. ບ້ານນັ້ນຢູ່ຂ້າງພູໃດ? ____________________ ຕົວອັກສອນໃດ? ______

ສ. ຈາກບ່ອນນັ້ນພະອົງໄດ້ເຫັນກຸງໃດ? ____________________ ຕົວອັກສອນໃດ? ______

ຊ. ມີຫຼາຍຄົນມາເທດສະການຈົນກວ່າບໍ່ມີເຮືອນຢູ່ ປະຊາຊົນຈຶ່ງຕ້ອງນອນຢ່າງໃດ? ______

ຍ. ພູໝາກກອກເທດເຕັມໄປດ້ວຍຜ້າຫຍັງ? ____________________

ດ. ຝູງຊົນຫຼາຍຄົນເອົາຫຍັງມາປູຫົນທາງ? __________ ແລະ __________

ຕ. ຂະບວນແຫ່ນັ້ນລົງຮ່ອມພູໃດ? ____________________ ຕົວອັກສອນໃດ? ______

ຖ. ຂຶ້ນໄປຟາກນັ້ນແລ້ວເຂົາເຂົ້າກຸງໃດ? ____________________

ທ. ພະອົງເຂົ້າບໍລິເວນໃດ? ____________________ ຕົວອັກສອນໃດ? ______

*ທ່ານສັງເກດເຫດການຕ່າງໆ ມາແລ້ວ ຕໍ່ໄປຈະຕີຄວາມໝາຍ*

**5** ໃຫ້ອ່ານມັດທາຍ 21:5 ພະເຢຊູຍົກພະທຳຈາກຜູ້ປະກາດຊາຂາລີຢາ
ຈຶ່ງບອກແກ່ລູກສາວຂອງໃຜ? ________________________________________

| ໃຫ້ທ່ານຂີດສີແດງກ້ອງຄຳ "ກະສັດ" ໃນ ມທ 21:5 |
|---|

**6** ທີ່ຜູ້ປະກາດພະທຳ ຊາຂາລີຢາຍົກຄຳ "ລູກສາວຂອງເມືອງຊີໂອນ" ມາ. ເພິ່ນອ້າງເຖິງປະຊາຊົນກຸງໃດ?____________________ ຊຶ່ງຕັ້ງໄວ້ຢູ່ພູຊີໂອນ. (ຄື ພູຊີໂອນເປັນອັນດຽວກັນກັບພູໂມລີອາສະໄໝອັບລາຮາມ)

**7** ດັ່ງນັ້ນ "ລູກສາວຂອງເມືອງຊີໂອນ" ອ້າງເຖິງປະຊາຊົນໃດ? ______________________

**8** ມັດທາຍ ກ່າວອ້າງຂໍ້ທຳນວາຍຈາກພະຄຳພີເດີມທີ່ສຳເລັດໃນເວລາພະອົງເຂົ້າກຸງ.
ກ. ພະອົງເຂົ້າກຸງໃດ? ______________________________________________
ຂ. ຂີ່ຫຍັງ? ____________________________________________________
ຄ. ເຂົ້າຢ່າງຜູ້ໃດ? _______________________________________________

**9** ກ. ທີ່ປະຊາຊົນເອົາເສື້ອຜ້າແລະຟົດໄມ້ມາປູຕາມທາງສະແດງວ່າເຂົາຍົກກຽດຕິຍົດໃຫ້ພະເຢຊູເປັນຫຍັງ? ______________________________________________
ຂ. ທັງລູກາ 19:38 ແລະໂຢຮັນ 12:13 ອ້າງເຖິງພະເຢຊູວ່າເປັນມະຫາ ______(ຕື່ມຄວາມ)

**10** ກ. ໃນມັດທາຍ 21:9 ເຫັນວ່າຝູງຄົນເຫຼົ່ານັ້ນຮ້ອງວ່າ "ໂຮຊັນນາແກ່ພະລາຊະບຸດຂອງດາວິດ." ໃຫ້ທ່ານກັບໄປອ່ານ ຈາກພະທຳຊາມູເອນທີສອງ 7:12-13 ເມື່ອດາວິດຕາຍໄປແລ້ວ ພະເຈົ້າຈະຕັ້ງໃຜ ມາເປັນກະສັດ? (ເລືອກ)
_____ ເຊື້ອສາຍຜູ້ໜຶ່ງ _____ ຄົນຕ່າງປະເທດຜູ້ໜຶ່ງ _____ ອ້າຍຜູ້ໜຶ່ງ
ຂ. ເຊື້ອສາຍນັ້ນຈະປົກຄອງດິນປານໃດ? __________________________________

**11** ຜູ້ທີ່ຂຶ້ນຕຳແໜ່ງຖັດກັບກະສັດດາວິດຄືກະສັດຊາໂລໂມນ ແຕ່ເຫັນວ່າກະສັດຊາໂລໂມນບໍ່ໄດ້ປົກຄອງຕະຫຼອດໄປ. ປາກົດວ່າຄຳທຳນວາຍນັ້ນມີຄວາມໝາຍກວ້າງກວ່າກະສັດຊາໂລໂມນໄປອີກ. ມີແຕ່ກະສັດອົງດຽວທີ່ຢູ່ຕະຫຼອດໄປຄືໃຜ? ___________________________

**12** ນອກຈາກຄຳສັນຍາໃນຊາມູເອນທີສອງນັ້ນຍັງມີຄຳທຳນວາຍອີກຫຼາຍໃນພະຄຳພີເດີມທີ່ອ້າງເຖິງອົງທີ່ຈະມາເປັນກະ ສັດ
ກ. ແມ່ນຜູ້ປະກາດພະທຳໃດທີ່ທຳນວາຍເລື່ອງກະສັດທີ່ສະເດັດມາເທິງຫຼັງລໍນ້ອຍ? ______
ຂ. ເອຊາຢາ 9:7 ບອກວ່າພະອົງຈະປົກຄອງສືບຕໍ່ກະສັດໃດ? __________________
ຄ. ເອຊາຢາ 32:1 ບອກວ່າຈະມີກະສັດທີ່ຊອບທຳອົງໜຶ່ງທີ່ປົກຄອງດ້ວຍຫຍັງ? ________

**13** ເບິ່ງຄຳທຳນວາຍໃນພະຄຳພີເດີມແລ້ວເຫັນວ່າ
ກ. ພະອົງຈະເປັນມະຫາ ____________________________________. (ຕື່ມຄວາມ)
ຂ. ຈະປົກຄອງດິນປານໃດ? ____________________________________________

ຄ. ຈະປົກຄອງດ້ວຍມີຄວາມຫຍັງ? ______________________________

ງ. ປົກຄອງຈາກພູໃດ? ______________________________

ຈ. ຈະຂີ່ຫຼັງຫຍັງມາ? ______________________________

**14** ຄຳວ່າ "ພູຊີໂອນ" ມີຄວາມໝາຍສອງປະການຄື ກຸງເຢລູຊາເລັມ ແລະອີກ ເມືອງຟ້າສະຫວັນດ້ວຍ.

ກ. ໃນພະທຳພະນິມິດ 14:1 ທີ່ວ່າພະເມສານ້ອຍ(ແກະນ້ອຍ) ຢືນຢູ່ທີ່ພູຊີໂອນຄືພະເຢຊູຢືນຢູ່ໃສ? ______________________________

ຂ. ທີ່ວ່າ "ພູຊີໂອນ" ນັ້ນອ້າງເຖິງພູໃນປະເທດປາແລັດສະຕິນ ຫຼືໃນຟ້າສະຫວັນ? ________

**15** ກ. ຜູ້ທີ່ພະເຈົ້າເລືອກໄວ້ນັ້ນຈະປົກຄອງຈາກບັນລັງກະສັດໃດ? ________________

ຂ. ຈະປົກຄອງດິນປານໃດ? ______________________________

ຄ. ເທິງພູໃດ? ______________________________

ງ. ຈະປົກຄອງດ້ວຍຄວາມຫຍັງ? ______________________________

ຈ. ໃນທີ່ສຸດພະອົງຈະປົກຄອງຈາກປະເທດປາແລັດສະຕິນ ຫຼືຈາກຟ້າສະຫວັນ? ________

ສ. ພະອົງຂີ່ຫຍັງເຂົ້າກຸງ? ______________________________

**16** ໃນສາຍຕາເຮົາ ຕົວລໍນ້ອຍເປັນຕົວທີ່ເຫງົາຫງອຍຢ່າງທີ່ບໍ່ມີຄວາມໝາຍແຕ່ໃນສະໄໝຂອງພະເຢຊູບໍ່ເປັນຢ່າງນັ້ນ. ເທື່ອໃດທີ່ມີກະສັດຂີ່ມ້າເຂົ້າມາໃກ້ເມືອງສະແດງວ່າເພິ່ນຈະມາຕີເສິກແຕ່ເທື່ອໃດທີ່ຈະຂີ່ລໍມາສະແດງວ່າເພິ່ນມາດ້ວຍຄວາມສະຫງົບສຸກ. ທີ່ເຫັນພະເຢຊູຂີ່ຫຼັງລໍນ້ອຍໝາຍຄວາມວ່າພະອົງມາຢ່າງໃດ? ______________________________

**17** ປະຊາຊົນທີ່ໂຮຮ້ອງວ່າ "ໂຮຊັນນາ" ສັນລະເສີນພະອົງໃນວັນທີ່ພະອົງສະເດັດເຂົ້າກຸງ ຝູງຊົນນັ້ນນຶກວ່າພະອົງຈະກະບົດຕໍ່ຈັກກະພັດໂລມ ມາຕັ້ງແຜ່ນດິນເອກະລາດໄວ້. ເຂົາບໍ່ສົນໃຈໃນການໄດ້ລອດຈາກຄວາມບາບ ເຂົາສົນໃຈແຕ່ຢາກຮັບການປົດປ່ອຍຈາກຈັກກະພັດໂລມ. ຈຸດປະສົງຂອງພະເຢຊູຫາກບໍ່ເປັນດັ່ງນັ້ນ ພະອົງມາເພື່ອຈະໃຫ້ຄົນບາບມີຄວາມລອດພົ້ນຈາກບາບ. (ຕໍ່ໄປນີ້ໃຫ້ຕື່ມຄວາມທີ່ຂາດ)

ກ. ພະອົງຂີ່ ______ ເຂົ້າກຸງ _________ ຕາມຄຳທຳນວາຍຂອງຜູ້ປະກາດພະທຳ _______

ຂ. ພະອົງມາຕັ້ງຕົນເອງໄວ້ເປັນມະຫາ ____________________ ທີ່ຈະປົກຄອງດ້ວຍຄວາມຍຸດຕິທຳ. ນັ່ງບັນລັງຂອງກະສັດ ________________ ຢູ່ພູ ____________________

**18** ໃຫ້ອ່ານ ມາລະໂກ 11:11

ກ. ເຖິງເຢລູຊາເລັມແລ້ວພະອົງເຂົ້າໄປບ່ອນໃດ? ______________________________

ຂ. ເບິ່ງສິ່ງທັງປວງແລ້ວພະອົງໄປໃສ? ______________________________

## ວັນຈັນ ຊົງຊໍາລະພະວິຫານ

**19** ໃຫ້ອ່ານ ມັດທາຍ 21:12-17 ມັດທາຍບໍ່ໄດ້ບອກວັນຊຶ່ງພະອົງຊໍາລະພະວິຫານ. ຖ້າຈະອ່ານຕາມລໍາດັບທີ່ບັນທຶກໄວ້ ໃນຂ່າວປະເສີດມັດທາຍເຮົາອາດຈະນຶກວ່າຊົງຊໍາລະພະວິຫານໃນວັນດຽວທີ່ເຂົ້າກຸງຢ່າງມີໄຊ. ມາລະໂກລາຍງານຕາມລໍາດັບຢ່າງລະອຽດກວ່າບອກຢ່າງຈະແຈ້ງວ່າພະອົງຊໍາລະພະວິຫານໃນວັນຕໍ່ໄປຄືວັນຈັນ. ເຫັນວ່າພະເຢຊູຜູ້ເປັນມະຫາກະສັດຕາມເຊື້ອວົງຂອງດາວິດມາຕັ້ງແຜ່ນດິນແລ້ວ. ຕາມໃນເອຊາຢາ 9:7 ຈະຊົງໃຫ້ອໍານາດຢ່າງຖືກຕ້ອງແລະ __________________________________ . (ຕື່ມຄວາມຂາດ)

**20** ມີຫຼາຍຄົນທີ່ຢາກປົດປ່ອຍປະຊາຊົນໃຫ້ມີຄວາມຍຸດຕິທໍາ ແຕ່ເຂົາຈະໃຊ້ອໍານາດຮຸນແຮງກະບົດຕໍ່ຜູ້ປົກຄອງ. ພວກ ຢິວທີ່ດຕາມພະອົງໄປມີຄວາມຫວັງວ່າພະເຢຊູຈະຢຶດອໍານາດເຊັ່ນດຽວກັນ. ແຕ່ແທນທີ່ຈະຢຶດອໍານາດດ້ວຍການຮຸນແຮງພະເຢຊູຂີ່ຫຼັງລໍນ້ອຍສະແດງວ່າພະອົງມາດ້ວຍທ່າທີໃດ? ________________________________________

**21** ທ່ານຈື່ເລື່ອງທີ່ພະເຢຊູຂວໍ້າໂຕະຂອງຄົນທີ່ແລກເງິນໃນເດີ່ນພະວິຫານ. ເຫດການເທື່ອທໍາອິດນັ້ນຕົກໃນປີທີ່ພະອົງຕຽມ ຕົວປ່າວປະກາດ

ກ. ພະເຢຊູຊໍາລະພະວິຫານສອງເທື່ອຄືເທື່ອທໍາອິດໃນສະໄໝປີໃດ? ______________

ຂ. ບັນທຶກໄວ້ໃນຂ່າວປະເສີດໃດ? ________________________________

ຄ. ເທື່ອທີສອງທີ່ພະເຢຊູຊໍາລະພະວິຫານຕົກໃນອາທິດສຸດທ້າຍໃນສະໄໝປີໃດ? _______

ງ. ໃນວັນໃດ? ___________________ ຖືກບັນທຶກໄວ້ໃນຂ່າວປະເສີດ 3 ເຫຼັ້ມທໍາອິດ.

**22** ໃນເທື່ອທີສອງທີ່ພະອົງຊໍາລະພະວິຫານນີ້ ພະອົງສອນວ່າມີແຕ່ທາງເສັ້ນດຽວທີ່ຈະຕັ້ງມີຄວາມຍຸດຕິທໍາໃນແຜ່ນດິນ ຂອງພະອົງ.

ກ. ພະເຢຊູເຮັດຢ່າງໃດເພື່ອຊໍາລະພະວິຫານ (ມທ 21:12) ____________________

____________________________________________________

ຂ. ບອກເຂົາວ່າຢ່າງໃດ? (ມທ 21:13) _______________________________

____________________________________________________

**23** ມີບາງຄົນທີ່ເຊື່ອວ່າ ຈະຕັ້ງຄວາມຍຸດຕິທໍາໄດ້ດ້ວຍການກະບົດຮຸນແຮງຢ່າງດຽວ. ເຂົານັກຍົກເລື່ອງນີ້ຈາກຊີວິດ ຂອງພະອົງວ່າ ພະອົງຂັບໄລ່ເຂົາອອກຈາກພະວິຫານຢ່າງຮຸນແຮງ. ແຕ່ໃຫ້ເຮົາຄິດເບິ່ງກ່ອນ ຖ້າພະເຢຊູເຂົ້າກຸງເພື່ອນໍາປະຊາຊົນໃຫ້ກະບົດຕໍ່ເຈົ້າຈັກກະພັດໂລມ. ຖ້າຢ່າງນັ້ນພະອົງຈະບໍ່ເຂົ້າພະວິຫານດອກ ຜູ້ຕ່າງໜ້າຈັກກະພັດໂລມບໍ່ໄດ້ຢູ່ໃນພະວິຫານ.

ກ. ປີລາດແລະທະຫານໂລມຢູ່ໃນທໍຄອຍໃດ? _____________

ຂ. ເຮໂລດອັນຕິປາແລະຜູ້ເຝົ້າຍາມຂອງເພິ່ນຢູ່ໃນລາຊະວັງໃດ?

_________________________________________

ຄ. ມະຫາປະໂລຫິດຢູ່ໃນລາຊະວັງໃດ? ________________



**24** ແຕ່ພະເຢຊູບໍ່ໄດ້ໄປຫາພວກຜູ້ປົກຄອງດ້ານການເມືອງ ພະອົງໄປເຖິງສູນກາງສາດສະໜາຂອງພະເຈົ້າ.

ກ. ຕາມໃນ ມທ 21:13 ພະວິຫານກາຍເປັນຖໍ້າຢ່າງໃດ? ______________________

ຂ. ແຕ່ພະວິຫານນັ້ນຄວນເປັນສະຖານທີ່ຢ່າງໃດ? ____________________________

**25** ພວກທີ່ຊື້ແລະຂາຍໃນພະວິຫານແລະຜູ້ແລກເງິນນັ້ນມີແຕ່ຂູດຮີດປະຊາຊົນ ພະອົງຈຶ່ງໄລ່ເຂົາໄປ. ການກະທຳຂອງ ພະອົງນັ້ນສອນຊໍ້າວ່າມີແຕ່ທາງເສັ້ນດຽວທີ່ຈະຕັ້ງມີຄວາມຊອບທຳແລະຄວາມຍຸດຕິທຳໃນແຜ່ນດິນຂອງພະເຈົ້າ.

<u>ພະວິຫານນັ້ນເປັນສັນຍາລັກຂອງການນະມັດສະການພະເຈົ້າ</u>

<u>ການກະທຳຂອງພະເຢຊູເປັນສັນຍາລັກໃນການຊຳລະ</u>

ດັ່ງນັ້ນ ການຊຳລະພະວິຫານເປັນຕົວຢ່າງໃນການນະມັດສະການພະເຈົ້າດ້ວຍໃຈເປັນຢ່າງໃດ? ______________________________________________________

**26** ກ. ພະອົງຊົງໂຜດຄົນຢ່າງໃດໃນມັດທາຍ 21:14? ____________ ແລະ __________

ຂ. ໃນ ມັດທາຍ 21:15-16 ແມ່ນຄົນຂະໜາດໃດສັນລະເສີນພະອົງ? ______________

**27** ການຊຳລະພະວິຫານເປັນຕົວຢ່າງໃນການໃດ? ______________________________

*ພະເຢຊູຊຳລະພະວິຫານດ້ວຍຂັບໄລ່ພວກພໍ່ຄ້າໃຫ້ອອກທີ່ປຽບທຽບການຊຳລະຈິດໃຈດ້ວຍ. ແຕ່ເຖິງຢ່າງນັ້ນກໍຕາມພວກອິດສະລາເອນຍັງບໍ່ຢາກຟັງຄວາມຂອງພະເຈົ້າເພາະເຫດນັ້ນ ປະມານ 40 ປີຫຼັງຈາກພະເຢຊູຕາຍ ແລ້ວຄືນມາອີກມີກອງທັບທະຫານໂລມເຂົ້າທຳລາຍກຸງເຢລູຊາເລັມທັງພະວິຫານດ້ວຍ. (ຄ.ສ.70)*

**28** ກ. ໂຢຮັນບົດທີ 2 ບອກເລື່ອງການຊົງຊຳລະພະວິຫານໃນເວລາພະອົງໄປປ່າວປະກາດພະທຳຄືໃນປີໃດ? ______________________________________________________

ຂ. ມັດທາຍ ບົດທີ 21 ບັນທຶກເລື່ອງການຊົງຊຳລະພະວິຫານໃນປີໃດ? _____________

**29** ດັ່ງນັ້ນ ມທ ບົດ 21 ເວົ້າເຖິງການຊຳລະເທື່ອທີໜຶ່ງ ຫຼືເທື່ອທີສອງ? _______________

**30** ມີເຫດການສອງປະການໃນເວລາພະເຢຊູເຂົ້າກຸງເຢລູຊາເລັມ

ກ. ພະອົງເຂົ້າກຸງຢ່າງໃດ? __________________________________________

ຂ. ຂີ່ຫຍັງ? ____________________________________________________

ຄ. ວັນໃດ? ____________________________________________________

ງ. ຕໍ່ໄປພະອົງຊຳລະຫຍັງ? _________________________________________

ຈ. ໃນວັນໃດ? __________________________________________________

ສ. ເຫດການນັ້ນປຽບທຽບຫຍັງ? ______________________________________

*ມາເຖິງນີ້ ເຮົາໄດ້ຮຽນເລື່ອງຄຳທຳນວາຍໃນພະຄຳພີເດີມທີ່ສຳເລັດໃນພະເຢຊູ ແຕ່ຍັງມີອີກດ້ວຍ.*

**31** ຜູ້ປະກາດພະທຳໃນພະຄຳພີເດີມທຳນວາຍວ່າພະອົງຈະມາຮັບໃຊ້ພະບິດາໃນ 3 ດ້ານຄື ຜູ້ປະກາດປະໂລຫິດແລະ ກະ ສັດ

ກ. ໃນສາມດ້ານນັ້ນ ພວກເຮົາຮຽນເລື່ອງດ້ານໃດມາກ່ອນ? ______________________

ຂ. ຍັງມີອີກສອງດ້ານໃດ? ______________________ ແລະ ____________________

**32** ໃຫ້ອ່ານ ມທ 21:11-12

ກ. ໃນຂໍ້ 11 ຝູງຊົນຕອບວ່າພະເຢຊູຄືຜູ້ໃດ? ______________________________

ຂ. ຂໍ້ 12 ບອກເຖິງທີ່ພະອົງເຂົ້າຊຳລະພະວິຫານ. ແມ່ນພາລະຂອງໃຜທີ່ຈະບົວລະບັດໃນພະວິຫານ? ______________________________________________________

**33** ໃນສາຍຕາຂອງຊາດຢິວການຮັບໃຊ້ທັງ 3 ຢ່າງນັ້ນເປັນພາລະທີ່ສຳຄັນຫຼາຍຄື:

**ກະສັດ** ປົກຄອງປະເທດໃຕ້ອຳນາດຂອງພະເຈົ້າ.

**ຜູ້ປະກາດ** ກ່າວພະຄຳຂອງພະເຈົ້າໃຫ້ປະຊາຊົນຟັງ.

**ປະໂລຫິດ** ອ້ອນວອນແລະບູຊາຕໍ່ພະເຈົ້າເພື່ອປະຊາຊົນ.

ກ. ກະສັດປົກຄອງໃຜ? ______________________________________________

ຂ. ປົກຄອງໃນນາມໃດ? ____________________________________________

ຄ. ຜູ້ປະກາດເປັນຜູ້ຕ່າງໜ້າໃຜຕໍ່ມະນຸດ? ________________________________

ງ. ຜູ້ປະກາດເປັນຜູ້ຕ່າງໜ້າພະເຈົ້າຕໍ່ໃຜ? ________________________________

ຈ. ປະໂລຫິດເປັນຜູ້ຕ່າງໜ້າໃຜຕໍ່ພະເຈົ້າ? ________________________________

ສ. ປະໂລຫິດເປັນຜູ້ຕ່າງໜ້າມະນຸດຕໍ່ໃຜ? ________________________________

**34** ຮູບຕໍ່ໄປນີ້ສະແດງເຖິງພາລະໃດ? (ໃຫ້ຂຽນລຸ່ມຮູບ)




ກ.__________________ ຂ.__________________ ຄ.__________________

**35** ໃນປະເທດອິດສະລາເອນ

ກ. ຜູ້ໃດປົກຄອງ? ______________________________________________

ຂ. ປົກຄອງໃຜ? ________________________________________________

ຄ. ປົກຄອງໃນນາມໃດ? ____________________________________________

ງ. ຜູ້ປະກາດເວົ້າຄວາມຈາກໃຜ? ____________________________________

ຈ. ເວົ້າໃຫ້ໃຜຟັງ? ______________________________________________

ສ. ປະໂລຫິດເປັນຜູ້ຕ່າງໜ້າໃຜ? ____________________________________

ຂ. ຕໍ່ໜ້າໃຜ? ______________________________________________

**36** ຜູ້ປະກາດພະທຳໃນສະໄໝພະຄຳພີເດີມ ທຳນວາຍວ່າພະອົງຈະມາຮັບໃຊ້ພະບິດາໃນສາມດ້ານນັ້ນ.

ກ. ໃນເອຊາຢາ 9:6-7 ທຳນວາຍເລື່ອງອົງທີ່ຈະມາໃນດ້ານໃດ? __________________

ໃນເມື່ອພະເຢຊູເຂົ້າກຸງເຢລູຊາເລັມຢ່າງຜູ້ມີໄຊ ຄຳທຳນວາຍນັ້ນສຳເລັດ.

ຂ. ໃນເວລານັ້ນພະອົງຂີ່ຫຍັງເຂົ້າກຸງ? ____________________________________

ຄ. ໃນພະບັນຍັດສອງ (ຄືພະກົດໝາຍສອງ) 18:15 ທຳນວາຍເລື່ອງຜູ້ທີ່ຈະມາຮັບໃຊ້ພະເຈົ້າໃນດ້ານໃດ? ______________________________________________

ງ. ຄຳນັ້ນສຳເລັດໃນ ມັດທາຍ 21:11 ຝູງຊົນບອກວ່າພະເຢຊູຄືໃຜ? _______________

ຈ. ເພງສັນລະເສີນ 110:4 ພະເຈົ້າສັນຍາເລື່ອງຫຍັງ? __________________________

ສ. ເຮັບເລີ 4:14 ບອກວ່າເຮົາມີຫຍັງ? ____________________________________

**37** ດັ່ງນັ້ນ ທີ່ພະເຢຊູເຂົ້າກຸງໃນຕົ້ນອາທິດສຸດທ້າຍ ພະອົງມາຮັບໃຊ້ພະບິດາຢ່າງສົມບູນໃນ 3 ດ້ານໃດ?________________ __________________ ແລະ _________________

ກ່ອນຈະຮ່ວມປະຊຸມເທື່ອໜ້າໃຫ້ທ່ານຊອກຫາຂໍ້ພະຄຳພີດັ່ງຕໍ່ໄປນີ້ວ່າແຕ່ລະຂໍ້ສອນເລື່ອງໃດກ່ຽວກັບພະເຢຊູໃຫ້ທ່ານຕຽມຕົວແລກປ່ຽນຄວາມຄິດເຫັນກັບໝູ່ໃນເລື່ອງນັ້ນ.

| | | |
|---|---|---|
| ກະສັດ: | ພສສ 2:6-12 | ໂລມ 14:17 |
| | ອຊຢ 9:6-7 | ມທ 21:5-9 |
| ຜູ້ປະກາດ: | ພບຍ 18:15 | ລກ 24:19 |
| | ກຈກ 3:23 | ມທ 21:11 ແລະ 46 |
| | ລກ 7:16 | |
| ປະໂລຫິດ: | ພສສ 110:4 | ຮບ 4:14 ເຖິງ 5:10 |
| | ຮບ 9:23-26 | ມທ 21:12-13 |

ໃຫ້ທ່ານຮັບພິຈາລະນາກ່ຽວກັບຄຳຖາມຕໍ່ໄປນີ້:

ພະເຢຊູມາຕັ້ງແຜ່ນດິນຢ່າງໃດໄວ້? ມີຫຼັກຖານໃດວ່າພະເຢຊູເປັນກະສັດນັ້ນ?

ຜູ້ປະກາດພະທຳຄືຫຍັງ? ມີຫຼັກຖານໃດທີ່ພະເຢຊູເປັນຜູ້ປະກາດພະທຳທີ່ທຳນວາຍໄວ້ໃນພະຄຳພີເດີມ?

ປະໂລຫິດ ແລະ ຜູ້ປະກາດມີສ່ວນແຕກຕ່າງກັນຢ່າງໃດ? ມີຫຼັກຖານໃດວ່າພະເຢຊູເປັນປະໂລຫິດທີ່ສັນຍາໄວ້ກ່ອນ?

*ແລ້ວເປີດເສັງບົດທີ 3*

**ຄໍາຕອບ:**

**1** ກ. ປັດສະຄາ ຂ. ເປີເລຍ ຄ. ຢໍດາເນ ງ. ເຢລິໂກ ຈ. ຊັກຂາຍ
ສ. ບາລະຕີມາຍ ຊ. ມາລີອາ ມາທາ ລາຊະໂລ ຍ. ເບດທາເນຍ ດ. ວັນສຸກ
ຕ. ວັນເສົາ ຖ. ເຢລູຊາເລັມ

**2** ກ. ຢ່າງມີໄຊ ຂ. ທັງ 4 ເຫຼັ້ມ ຄ. ມທ 21:1-11

**3** ກ. ເບດຟາເຄ ຂ. ອັກສອນ ຖ ຄ. ໝາກກອກເທດ ງ. ລໍແມ່ ແລະ ລູກມັນ
ຈ. ຊາຂາລີຢາ ສ. ຕົວນ້ອຍ ຊ. ເສື້ອຜ້າ ແລະພືດໄມ້ ຍ. ບໍລິເວນພະວິຫານ
ດ. ກັບໄປເບດທາເນຍ

**4** ກ. ອາທິດ ຂ. ອັກສອນ ທ ຄ. ເບດຟາເຄ ອັກສອນ ຖ ງ. ລໍ
ຈ. ໝາກກອກເທດ ອັກສອນ ຄ ສ. ເຢລູຊາເລັມ ອັກສອນ ກ ຊ. ນອນຜ້າເຕັນ
ຖ. ເຢລູຊາເລັມ ຍ. ຜ້າເຕັນ ທ.ພະວິຫານ ອັກສອນ ງ ດ. ເສື້ອຜ້າ ແລະພືດໄມ້
ຕ. ກິດໂລນ ອັກສອນ ຂ

**5** ເມືອງຊີໂອນ

**6** ເຢລູຊາເລັມ

**7** ປະຊາຊົນກຸງເຢລູຊາເລັມ

**8** ກ. ເຢລູຊາເລັມ ຂ. ລໍນ້ອຍ ຄ. ຢ່າງຜູ້ມີໄຊ

**9** ກ. ກະສັດ ຂ. ກະສັດ

**10** ກ. ເຊື້ອສາຍຜູ້ໜຶ່ງ ຂ. ຕະຫຼອດໄປ

**11** ພະເຢຊູ

**12** ກ. ຊາຂາລີຢາ ຂ. ດາວິດ ຄ. ຍຸດຕິທໍາ

**13** ກ. ກະສັດ ຂ. ຕະຫຼອດໄປ ຄ. ຍຸດຕິທໍາ ງ. ຊີໂອນ ຈ. ລໍນ້ອຍ

**14** ກ. ພູຊີໂອນ ຂ. ຟ້າສະຫວັນ

**15** ກ. ດາວິດ ຂ. ຕະຫຼອດໄປ ຄ. ຊີໂອນ ງ. ຍຸດຕິທໍາ ຈ. ຈາກຟ້າສະຫວັນ
ສ. ລໍນ້ອຍ

**16** ດ້ວຍຄວາມສະຫງົບສຸກ

**17** ກ. ລໍນ້ອຍ... ເຢລູຊາເລັມ... ຊາຂາລີຢາ ຂ. ກະສັດ... ດາວິດ... ຊີໂອນ

**18** ກ. ບໍລິເວນພະວິຫານ ຂ. ບ້ານເບດທາເນຍ

**19** ຍຸດຕິທໍາ

**20** ຄວາມສະຫງົບ

**21** ກ. ປີທີ່ຕຽມຕົວ ຂ. ໂຢຮັນ ຄ. ປີທີ່ສໍາເລັດ ງ. ວັນຈັນ (ອາທິດສຸດທ້າຍ)

**22** ກ. ຂັບໄລ່ຜູ້ຊື້ຂາຍ ຂວໍ້າໂຕະຜູ້ແລກເງິນກັບທັງບ່ອນນັ່ງຂອງຜູ້ຂາຍນົກເຂົາ
ຂ. ມີຄໍາຊຽນໄວ້ໃນພະຄໍາພີວ່າ "ວິຫານຂອງເຮົາ ເຂົາຈະເອີ້ນວ່າເປັນສະຖານທີ່ໄຫວ້ວອນ ແຕ່ຝ່າຍພວກເຈົ້າໄດ້ເຮັດໃຫ້ເປັນຖໍ້າຂອງໂຈນ."

**ຄໍາຕອບ (ຕໍ່):**

**23** *ກ. ອັນໂຕເນຍ ຂ. ແມັກຄາບິດ*
*ຄ. ລາຊະວັງຂອງມະຫາປະໂລຫິດ (ປະໂລຫິດໃຫຍ່)*

**24** *ກ. ຖໍ້າຂອງໂຈນ ຂ. ສະຖານທີ່ໄຫວ້ວອນ*

**25** *ໃຈຊໍາລະ*

**26** *ກ. ຄົນຕາບອດ ແລະ ຄົນຂາເສັ້ງ ຂ. ເດັກນ້ອຍ*

**27** *ຊໍາລະໃຈ*

**28** *ກ. ຫຽມຕົວ ຂ. ສໍາເລັດ*

**29** *ທີສອງ*

**30** *ກ. ຢ່າງຜູ້ມີໄຊ ຂ. ລໍນ້ອຍ ຄ. ວັນອາທິດ ງ. ພະວິຫານ ຈ. ວັນຈັນ*
*ສ. ການຊໍາລະໃຈ*

**31** *ກ. ກະສັດ ຂ. ປະໂລຫິດ ແລະ ຜູ້ປະກາດພະທໍາ*

**32** *ກ. ຜູ້ປະກາດ ຂ. ປະໂລຫິດ*

**33** *ກ. ປະຊາຊົນ ຂ. ພະເຈົາ ຄ. ພະເຈົາ ງ. ມະນຸດ (ປະຊາຊົນ)*
*ຈ. ມະນຸດ ສ. ພະເຈົາ*

**34** *ກ. ປະໂລຫິດ ຂ. ກະສັດ ຄ. ຜູ້ປະກາດ*

**35** *ກ. ກະສັດ ຂ. ປະຊາຊົນ (ມະນຸດ) ຄ. ພະເຈົາ ງ. ພະເຈົາ*
*ຈ. ມະນຸດ (ປະຊາຊົນ) ສ. ມະນຸດ ຊ. ພະເຈົາ*

**36** *ກ. ກະສັດ (ຜູ້ປົກຄອງ) ຂ. ລໍນ້ອຍ ຄ. ຜູ້ປະກາດ ງ. ຜູ້ປະກາດ*
*ຈ. ປະໂລຫິດ ສ. ມະຫາປະໂລຫິດຜູ້ໃຫຍ່*

**37** *ກະສັດ, ຜູ້ປະກາດ ແລະ ປະໂລຫິດ.*